ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເປີດກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ II ປະຈຳປີ 2021




ໃນຕອນບ່າຍຂອງວັນທີ 16 ກໍລະກົດ 2021 ນີ້ ທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໄດ້ເປີດກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບຄັ້ງທີ II ປະຈຳປີ 2021 ຂຶ້ນໂດຍການໃຫ້ກຽດເປັນປະທານໃນພິທີຂອງທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການແລະການລົງທຶນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ພ້ອມດ້ວຍການເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ), ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ແທນກອງປະຊຸມທີ່ເປັນຄະນະກຳມະການ ຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ ທ່ານນາງ ສາຍສະໝອນ ຈັນທະຈັກ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໄດ້ລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງ ສຄຄຊ ໃນໄລຍະ 6 ເດືອນຕົ້ນປີ ແລະ ແຜນການປະຈຳ 6 ເດືອນທ້າຍປີ 2021 ພ້ອມທັງໄດ້ນຳສະເໜີຕໍ່ກອງປະຊຸມ ຄຄຊ ເພື່ອຮັບຮອງເອົາຮ່າງຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2030 (ສະບັບປັບປຸງ). ຫຼັງຈາກນັ້ນ, ທ່ານ ອ໊ອດ ພົນຊຽງດີ ຜູ້ອຳນວຍການຕະຫຼາດຫຼັກຊັບລາວ (ຕລຊລ) ໄດ້ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຄຊ ຄັ້ງທີ I ປະຈຳປີ 2021 ທີ່ຕິດພັນກັບສັນຍາ JVA ຮ່ວມກັບ ຕະຫຼາດຫຼັກຊັບ ສ. ເກົາຫຼີ, ການປະກອບທຶນຂອງຂາຮຸ້ນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງ ຕລຊລ ແລະ ລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງ ຕລຊລ ໄລຍະ 6 ເດືອນຕົ້ນປີ 2021 ແລະ ແຜນການປະຈຳ 6 ເດືອນທ້າຍປີ 2021ໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບ.






ໃນຕອນທ້າຍ, ທ່ານຮອງນາຍົກລັດຖະມົນຕີ, ປະທານ ຄຄຊ ໄດ້ໃຫ້ກຽດມີຄຳເຫັນຕໍ່ກອງປະຊຸມ, ໂດຍໄດ້ຊົມເຊີຍຜົນສຳເລັດຂອງກອງປະຊຸມ ຄຄຊ ຄັ້ງທີ I ປະຈຳປີ 2021 ເຊິ່ງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຄຸ້ມຄອງຫຼັກຊັບຢ່າງຕັ້ງໜ້າ, ອັນພົ້ນເດັ່ນແມ່ນ ໄດ້ຮັບຮອງເອົາແຜນວຽກການຈັດຕັ້ງປະຕິບັດມາດຕະຖານສາກົນ ດ້ານການລາຍງານການເງິນ ສຳລັບຂະແໜງຫຼັກຊັບ (IFRS Road Map), ໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງອຳນວຍຄວາມສະດວກໃນການຂາຍພັນທະບັດລັດຖະບານ ຊຶ່ງມີຄວາມຄືບໜ້າພໍສົມຄວນ, ພ້ອມທັງໄດ້ຕີລາຄາສູງຕໍ່ຜົນໄດ້ຮັບຂອງກອງປະຊຸມ ຄຄຊ ໃນຄັ້ງທີ II ປະຈຳປີ 2021 ນີ້ ດ້ວຍຄວາມຮັບຜິດຊອບສູງຂອງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ທີ່ໄດ້ພ້ອມໃຈກັນຄົ້ນຄວ້າພິຈາລະນາ, ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ມີລັກສະນະສ້າງສັນ. ພ້ອມດຽວກັນນີ້, ເພື່ອເປັນການສືບຕໍ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບໃຫ້ໜັກແໜ້ນເຂັ້ມແຂງກວ່າເກົ່າ, ທ່ານໄດ້ຮຽກຮ້ອງໃຫ້ ຄຄຊ ຈົ່ງຮີບຮ້ອນປະສານສົມທົບກັບຂະແໜງການກ່ຽວຂ້ອງຕ່າງໆ ເພື່ອຜັນຂະຫຍາຍເນື້ອໃນຈິດໃຈກອງປະຊຸມຄັ້ງນີ້ ເປັນໜ້າວຽກລະອຽດ ແລະ ຈັດຕັ້ງເຊື່ອມຊຶມໃຫ້ເປັນເອກະພາບກັນ. ພ້ອມທັງຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈທີ່ກອງປະຊຸມຄັ້ງນີ້ ໄດ້ຮັບຮອງເອົາໃຫ້ເປັນຮູບປະທຳ, ດ້ວຍຄວາມເປັນເຈົ້າການ ແລະ ດ້ວຍຄວາມຮັບຜິດຊອບສູງ. ໃນການຈັດຕັ້ງປະຕິບັດ ກໍ່ໃຫ້ມີການຕິດຕາມກວດກາ ແລະ ສະຫຼຸບຖອດຖອນບົດຮຽນແຕ່ລະໄລຍະຢ່າງເໝາະສົມ ເພື່ອໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນສູງເພື່ອພັດທະນາຕະຫຼາດທຶນລາວໃຫ້ມີປະສິດທິພາບ, ມີຄວາມໜ້າເຊື່ອຖື ແລະ ມີຄວາມຄຶກຄື້ນກວ່າເກົ່າ.

**# ຂ່າວ-ພາບ: ນ. ວັນປະເສີດ ສົມບູນຂັນ.**

## ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ